ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

................000000................

ກົມອາຫານ ແລະ ຢາ
ເລກທີ 4763
ວັນທີ 29 JUL 2015
1101

ກະຊວງສາທາລະນະສຸກ

ເລກທີ:............../ສທ

ນະຄອນຫຼວງວຽງຈັນ, ວັນທີ: 17 JUL 2015

## ຄຳສັ່ງແນະນຳ

## ຂອງທ່ານລັດຖະມົນຕີວ່າການກະຊວງສາທາລະນະສຸກ

ເຖິງ: ທ່ານຫົວໜ້າພະແນກສາທາລະນະສຸກແຂວງໃນທົ່ວປະເທດ ແລະ ນະຄອນຫຼວງວຽງຈັນ

ເລື່ອງ: ການເຝົ້າລະວັງ ແລະ ການໂຕ້ຕອບຕໍ່ການລະບາດພະຍາດຄໍຕີບ ແລະໄຂ້ທໍລະພິດ ທີ່ອາດເກີດຂຶ້ນໃນແຂວງຂອງທ່ານ

ເນື່ອງຈາກສະພາບການເກີດລະບາດພະຍາດຄໍຕີບໃນລະຫວ່າງເດືອນ 6/2015 ເປັນຕົ້ນມາ ຢູ່ໃນບາງເມືອງຂອງແຂວງວຽງຈັນ, ນະຄອນຫຼວງ, ຄຳມ່ວນ ແລະ ສະຫວັນນະເຂດ ທີ່ອາດຂະຫຍາຍໄປຫາແຂວງອື່ນໄດ້. ເພື່ອຫຼີກເວັ້ນບໍ່ໃຫ້ມີການແຜ່ລາມ, ບໍ່ໃຫ້ມີການເຈັບເປັນເພີ່ມຂຶ້ນ ແລະ ບໍ່ໃຫ້ມີຜູ້ເສຍຊີວິດຈາກພະຍາດດັ່ງກ່າວ,

### ລັດຖະມົນຕີວ່າການກະຊວງສາທາລະນະສຸກ ຈຶ່ງອອກຄຳສັ່ງແນະນຳຄືດັ່ງນີ້:

1. ໃຫ້ປະສານງານນຳອຳນາດການປົກຄອງທຸກຂັ້ນ ເພື່ອຊ່ວຍກັນໃນການເຝົ້າລະວັງ, ຄົ້ນຫາກໍລະນີ, ຕອບໂຕ້ ແລະ ປິ່ນປົວໃຫ້ທັນການ;
2. ໃຫ້ທ່ານຫົວໜ້າພະແນກສາທາລະນະສຸກແຂວງ ຈົ່ງໄດ້ຊີ້ນຳໃຫ້ແພດໝໍທີ່ປະຈຳໃນຂົງເຂດປິ່ນປົວ ຢູ່ຂັ້ນແຂວງ, ຂັ້ນເມືອງ ແລະ ສຸກສາລາ ຈົ່ງເອົາໃຈໃສ່ເຝົ້າລະວັງ ແລະ ຕິດຕາມການເກີດກໍລະນີພະຍາດຄໍຕີບ ໂດຍສະເພາະກໍລະນີຄົນເຈັບທຸກເກນອາຍຸເຂົ້າມາປິ່ນປົວດ້ວຍອາການເຈັບຄໍ, ໄຂ້, ຄາງກະໄຕໄຄ່ບວມ, ກືນນ້ຳ ແລະ ອາຫານຍາກ, ຫາຍໃຈຍາກ ແມ່ນໃຫ້ເກັບຕົວຢ່າງ (ຖ້າມີເງື່ອນໄຂ) ແລ້ວລິເລີ່ມການປິ່ນປົວໂດຍໄວ ຕາມເອກະສານແນະນຳການປິ່ນປົວທີ່ສະໜອງມາໃຫ້ນັ້ນ;
3. ເມື່ອພົບເຫັນກໍລະນີດັ່ງກ່າວແລ້ວ ແມ່ນໃຫ້ຈັດທີມແພດຜູ້ຊ່ຽວຊານລົງໄປກວດກາຢູ່ຂັ້ນບ້ານ ໂດຍເປີດການກວດພະຍາດແບບເປີດກວ້າງ, ລະດົມໃຫ້ທຸກຄົນທີ່ມີອາການມາກວດເພື່ອຄົ້ນຫາກໍລະນີໃຫ້ໄວ ແລະ ລິເລີ່ມປິ່ນປົວແຕ່ຫົວທີ
4. ໃຫ້ຈັດຂະບວນການສັກຢາກັນພະຍາດແບບຕະລຸມບອນໃນບ້ານ ແລະ ຂົງເຂດທີ່ມີຄວາມສ່ຽງຈະແຜ່ລາມທັນທີ (ຕາມການແນະນຳຂອງໂຄງການສັກຢາກັນພະຍາດທີ່ມີໃຫ້ແລ້ວ);
5. ເປີດຂະບວນການສຸຂະສຶກສາໃຫ້ກວ້າງຂວາງ, ເນື່ອງນິດລຽນຕິດໃນຂົງເຂດທີ່ມີຄວາມສ່ຽງ ເພື່ອໃຫ້ປະຊາຊົນເຂົ້າໃຈ ແລະ ໃຫ້ການຮ່ວມມື. ແນະນຳໃຫ້ປະຊາຊົນໃນເຂດລະບາດ ແລະ ບ້ານໄກ້ຄຽງ ຫຼຸດຜ່ອນການໄປມາຫາສູ່ ໂດຍສະເພາະໃນໄລຍະພະຍາດລະບາດ ເພາະຈະນຳເອົາເຊື້ອພະຍາດໄປແຜ່ໃສ່ບ່ອນອື່ນ;
6. ການປິ່ນປົວກໍລະນີສົງໃສ ຫຼື ກໍລະນີຢັ້ງຢືນຈາກຫ້ອງວິເຄາະກໍ່ຕາມ ແມ່ນແນະນຳໃຫ້ປິ່ນປົວຢູ່ຂັ້ນບ້ານ ຫຼື ສຸກສາລາ ແຕ່ຖ້າຈຳເປັນກໍ່ໃຫ້ນຳສົ່ງໄປຫາຂັ້ນເມືອງ ຫຼື ຂັ້ນແຂວງ ອີງຕາມສະພາບ ແລະ ເງື່ອນໄຂຂອງຄົນເຈັບ;

7. ສໍາລັບການປິ່ນປົວຄົນເຈັບທີ່ສົງໃສ ຫຼື ຢັ້ງຢືນຈາກຫ້ອງວິເຄາະວ່າເປັນພະຍາດຄໍຕີບ ແມ່ນໃຫ້ປິ່ນປົວໂດຍບໍ່ເກັບຄ່າ ລວມທັງການນໍາສົ່ງຄົນເຈັບ ແລະ ສະໜອງອັດຕາກິນຕໍ່ວັນ 50,000 ກີບໃນຂັ້ນແຂວງ, 40,000 ກີບໃນຂັ້ນເມືອງ ແລະ 30,000 ກີບໃນຂັ້ນສຸກສາລາ. ສິ່ງທີ່ສໍາຄັນ ຕ້ອງຮັກສາຄົນເຈັບໄວ້ 10-14 ວັນ ເພື່ອຫຼີກເວັ້ນອາການສົບຂອງເຫຍື້ອຫຸ້ມຫົວໃຈຊຶມນໍ້າ;
8. ໃຫ້ຮິບໂຮມສະຫຼຸບຄ່າໃຊ້ຈ່າຍໄວ້ ແລ້ວຈຶ່ງທົດແທນຕາມພາຍຫຼັງ ຕາມເງື່ອນໄຂຕົວຈິງ, ບຸລິມະສິດແມ່ນໃຫ້ໄດ້ປິ່ນປົວຄົນເຈັບທັນເວລາ ແລະ ຄົບຕາມກໍານົດ;
9. ໃຫ້ກະກຽມຈັດອົບຮົມວິທີການປິ່ນປົວ ແລະ ການໂຕ້ຕອບໃຫ້ແພດໝໍທຸກຂັ້ນໃຫ້ທົ່ວເຖິງເພື່ອໃຫ້ກຽມພ້ອມ;
10. ຖ້າບ່ອນໃດຫາກບໍ່ທັນມີການແຕ່ງຕັ້ງຄະນະກໍາມະການໂຕ້ຕອບຕໍ່ການລະບາດພະຍຸພະຍາດ ແມ່ນຄວນໃຫ້ແຕ່ງຕັ້ງ ແລະ ມອບໝາຍໜ້າວຽກໃຫ້ແຕ່ລະພາກສ່ວນໃຫ້ລະອຽດ;
11. ຄໍາສັ່ງແນະນໍາສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງສາທາລະນະສຸກ

ສາດສະດາຈານ ດຣ ເອກສະຫວ່າງ ວົງວິຈິດ